ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110



# ກອງປະຊຸມຄະນະກຳມະການນະໂຍບາຍເງິນຕາ ຂອງສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຄັ້ງທີ 3 ຂອງປີ 2023




ໃນຕອນບ່າຍຂອງວັນທີ 31 ກໍລະກົດ 2023 ໄດ້ຈັດກອງປະຊຸມຄະນະກຳມະການນະໂຍບາຍເງິນຕາ ຂອງສະພາບໍລິຫານ ທຫລ (Monetary Policy Committee) ຄັ້ງທີ 3 ຂອງປີ 2023 ຂຶ້ນ ໂດຍການເປັນປະທານຂອງທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ, ປະທານຄະນະກຳມະການນະໂຍບາຍເງິນຕາຂອງສະພາບໍລິຫານທະນາຄານແຫ່ງ ສປປ ລາວ ພ້ອມທັງສະມາຊິກຄະນະກຳມະການຈາກທະນາຄານແຫ່ງ ສປປ ລາວ ແລະ ບັນດາກະຊວງກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມຄະນະກຳມະການນະໂຍບາຍເງິນຕາ ຂອງສະພາບໍລິຫານ ທຫລ ໃນຄັ້ງນີ້ ໄດ້ປຶກສາຫາລືບັນຫາສຳຄັນຕົ້ນຕໍຄື: ສະຫຼຸບຜົນການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ 2023 ແລະ ການົດທິດທາງແຜນການຮອດທ້າຍປີ 2023 ຊຶ່ງຈະສືບຕໍ່ດຳເນີນນະໂຍບາຍໃນທິດທາງທີ່ຮັດກຸມ ເພື່ອຮັກສາສະຖຽນລະພາບດ້ານເງິນຕາໃຫ້ໝັ້ນທ່ຽງ, ອັດຕາເງິນເຟີ້ຢູ່ໃນລະດັບທີ່ສະພາຮັບຮອງ.

ກອງປະຊຸມດຳເນີນໄປ ດ້ວຍບັນຍາກາດທີ່ຟົດຟື້ນ ແລະ ປິດລົງໃນເວລາ 16:00 ໂມງຂອງມື້ດຽວກັນ ພ້ອມກັບສຳເລັດຕາມລະດັບຄາດໝາຍ.




ຂ່າວ: ກົມນະໂຍບາຍເງິນຕາ
ພາບ: ນ. ອັນປະເສີດ ສົມບູນຍັນ

*ຄົນລາວຮັກເມືອງລາວໃຊ້ເງິນກີບລາວ*